# ຄວາມເຄົາລົບ




ວິຊາໄດ້ເອົາຮູບຄອບຄົວຂອງລາວໃຫ້ຈິນດາເບິ່ງ.
ນີ້ແມ່ນຝາແຝດທີ່ເປັນພີ່ນ້ອງຂອງຂ້ອຍ, ຈັນ ແລະ ຊາຍ ພວກເຂົາໃຊ້ຊີວິດແຕກຕ່າງກັນ.
ຈັນຕ້ອງເຮັດວຽກເຮືອນທັງໝົດ ເພາະວ່າລາວເປັນລູກສາວພຽງແຕ່ຄົນດຽວ.
ໃນຂະນະທີ່ ຊາຍບໍ່ຕ້ອງເຮັດຫຍັງເລີຍ.
ໂອ້ ອາຫານແຊບຫຼາຍເນາະ!
ຈັນຕ້ອງເຮັດວຽກເຮືອນໃຫ້ແລ້ວໝົດທຸກຢ່າງ ລາວຈຶ່ງຈະສາມາດໄປທາງອື່ນໄດ້.


ຊາຍມີເວລາ ຫຼັງຈາກເລີກໂຮງຮຽນ.
ແຕ່ຈັນຕ້ອງເມືອເຮືອນເພື່ອຊ່ວຍວຽກ.
ເວລາຢູ່ເຮືອນ ມັນຍາກຫຼາຍສຳ
ລັບຈັນທີ່ຈະມີເວລາວ່າງ.
ຊາຍພັດມີເວລາວ່າງຫຼາຍ ໂພພດ
ເປັນຫຍັງ
ຊາຍຄືບໍ່ຊ່ວຍຫຍັງເລີຍ.
ຊາຍຈະຊ່ວຍວຽກຢູ່ໃນ
ເຮືອນບາງຢ່າງເທົ່ານັ້ນ
ເພາະວ່າມັນບໍ່ແມ່ນວຽກຜູ້ຊາຍ.


ມື້ໜຶ່ງຢູ່ລະຫວ່າງທາງຈາກໂຮງຮຽນເມືອເຮືອນ,
ລົດຖີບຂອງຈັນຢາງຮົ່ວ. ຢູ່ທາງໜ້ານັ້ນມີຊາຍກຸ່ມໜຶ່ງ.
ສູ- ສູ ເບິ່ງນີ້ແມ້.
ພວກເຂົາເບິ່ງສິ່ງທີ່ບໍ່ດີຢູ່ໃນໂທລະສັບ.
ຂະນະທີ່ຈັນກໍາລັງຍ່າງກາຍໄປ, ຊາຍຜູ້ໜຶ່ງທີ່ຢູ່ໃນກຸ່ມນັ້ນໄດ້ດຶງລົດຖີບຂອງລາວໄວ້.


ເຈົ້າຊິໄປໃສ ຜູ້ສາວ?
ໄປນຳພວກເຮົາບໍ່?
ໄປບ່ອນ
ພວກເຮົາຢູ່.
ຢຸດ!
ພວກເຈົ້າຈະເຮັດຫຍັງ
ກັບນ້ອງສາວຂ້ອຍ.


ບໍ່ມີຫຍັງດອກ! ຮ່າມຶງເອີ້ຍ.
ເປັນຫຍັງຜູ້ຍິງຈິ່ງຖືກ ປະຕິບັດຕາງກັນ? ຂ້ອຍບໍ່ຢາກເກີດ ເປັນຜູ້ຍິງເລີຍ.
ທັນໃດນັ້ນ ຊາຍນຶກຂຶ້ນໄດ້ວ່າ..... ນ້ອງຂອງລາວ ເວົ້າຖືກ. ເພາະຊີວິດລາວບໍ່ຍຸດຕິທຳເລີຍ.
ເຈົ້າຮູ້ບໍ່? ມີບາງຢ່າງທີ່ຈຳ ເປັນຕ້ອງໄດ້ປ່ຽນ.


ຫຼັງຈາກມື້ນັ້ນມາ ຊາຍກໍໄດ້ຊ່ວຍວຽກເຮືອນຫຼາຍຂຶ້ນ.
ມື້ໜຶ່ງ....
ສູ! ຈື່ລາວໄດ້ບໍ່?
ເທື່ອນີ້,ຢາກໄປກັບພວກເຮົາບໍ່?
ຢຸດໃດ໋! ພວກເຈົ້າບໍ່ມີສິດທີ່ຈະເຮັດກັບ ນ້ອງສາວຂ້ອຍແນວນັ້ນ.
ຮະ!


ຊາຍ ສອນຂ້ອຍທີ່ຈະເຄົາລົບຜູ້ຍິງເພາະ
ວ່າທັງຜູ້ຊາຍແລະຜູ້ຍິງມີຄຸນຄ່າເທົ່າກັນ
ໃນສາຍຕາຂອງພຣະເຈົ້າ.
ພຣະເຈົ້າໄດ້ສ້າງພວກເຮົາແລະຮັກ
ພວກເຮົາແຕ່ລະຄົນ ປຽບດັ່ງລູກຂອງພ
ຣະອົງບໍ່ວ່າພວກເຮົາຈະເປັນຜູ້ຍິງຫຼືຜູ້ຊ
າຍ.


ຄຳຖາມສົນທະນາ
ຄຳຖາມ
ວຽກຫຍັງທີ່ຜູ້ຍິງເຮັດຢູ່ເຮືອນ ໂດຍທີ່ຜູ້ຊາຍບໍ່ຕ້ອງເຮັດ?
ເປັນຫຍັງເຈົ້າຈຶ່ງຄິດວ່າຜູ້ຊາຍແລະຜູ້ຍິງມີບົດບາດແລະ
ຄວາມຄາດຫວັງທີ່ແຕກຕ່າງກັນ?
ສິ່ງໃດທີ່ຍາກສຳລັບເຈົ້າ ຖ້າຫາກວ່າມື້ໜຶ່ງຜູ້ຊາຍກາຍເປັນຜູ້ຍິງ ແລະ
ຜູ້ຍິງກາຍເປັນຜູ້ຊາຍ? ສິ່ງໃດທີ່ເຈົ້າຄິດວ່າຈະດີກວ່າ
ກັນ?


ກິດຈະກຳ
ຈົ່ງຄິດກ່ຽວກັບຜູ້ຍິງຄົນໜຶ່ງທີ່ເຮັດວຽ
ກໜັກຢູ່ໃນເຮືອນເພື່ອເບິ່ງແຍງເຈົ້າ.
ຈົ່ງຂຽນຄຳຂອບໃຈລາວ ສຳລັບທຸກສິ່ງທີ່
ລາວເຮັດທຸກໆມື້ເພື່ອເຈົ້າ
ຂ້ານ້ອຍຍ້ອງຍໍສັນລະເສີນພຣະອົງ
ເພາະພຣະອົງເປັນທີ່ຢ້ານຢຳ ທຸກສິ່ງທີ່ພ
ຣະອົງຊົງກະທຳນັ້ນເປັນທີ່ປະຫຼາດໃຈແ
ທ້ໆ ເພງສັນລະເສີນ 139:14





បងធំកម្ពុជា
ALONGSIDERS CAMBODIA

www.alongsiders.org
Email: serey@alongsiders.org
: